ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ 3120 /ກຕສ

ນະຄອນຫຼວງວຽງຈັນ, ວັນທີ 20 ຕຸລາ 2022

# ຂໍ້ຕົກລົງ

## ວ່າດ້ວຍ ການອະນຸມັດຮັບຮອງເອົາຜູ້ຊະນະການປະມູນ ຈັດຊື້-ຈັດຈ້າງ ລະບົບການສື່ສານພາກລັດ (G-Chat) ປະຈຳປີ 2022.

- ອີງຕາມດຳລັດຂອງທ່ານນາຍົກລັດຖະມົນຕີ, ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ
- ອີງຕາມໜັງສືສະເໜີ ຂໍອະນຸມັດອອກຂໍ້ຕົກລົງຮັບຮອງເອົາຜູ້ຊະນະການປະມູນ ຈັດຊື້-ຈັດຈ້າງ ລະບົບການສື່ສານພາກລັດ (G-Chat) ປະຈຳປີ 2022, ສະບັບເລກທີ 746/ສລດ, ລົງວັນທີ 10 ຕຸລາ 2022.
- ອີງຕາມບົດບັນທຶກເປີດຊອງປະມູນ ລະບົບການສື່ສານຂອງພາກລັດ (Government Chatting Application ຫຼື G-Chat) ປະຈຳປີ 2022, ຄັ້ງວັນທີ 21 ກັນຍາ 2022.

## ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຕົກລົງ:

ມາດຕາ 1: ເຫັນດີອະນຸມັດໃຫ້ ບໍລິສັດ ອາໂລ ເທັກໂນໂລຊີ ຈຳກັດ ເປັນຜູ້ຊະນະການ ຈັດຊື້-ຈັດຈ້າງ ລະບົບການສື່ສານພາກລັດ (Government Chatting Application ຫຼື G-Chat) ປະຈຳປີ 2022.

ມາດຕາ 2: ມອບໃຫ້ຄະນະຈັດຊື້-ຈັດຈ້າງ ລະບົບການສື່ສານພາກລັດ (G-Chat) ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ປະຕິບັດຕາມລະບຽບຂອງກະຊວງ ການເງິນວາງອອກ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງເຕັກໂນໂລຊີ ແລະ ... ລັດຖະມົນຕີ

ບໍ່ວຽງຄຳ ວົງດາລາ